

# ເອກະລັກຂອງຊົນເຜົ່າ

# ຊິງມູນ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe'de'ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: “ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ”. ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ຊິງມູນ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າຊິງມູນ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ຊິງມູນ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ, ບາງຮີດ ແລະ ປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ຊີງມູນ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ປັດຈຸບັນຊົນເຜົ່າ ຊີງມູນ ຕັ້ງຖິ່ນຖານບ້ານຊ່ອງ ແລະ ດຳລົງຊີວິດຢູ່ເມືອງ ຊຽງຄໍ້ ແຂວງ ຫົວພັນ. ນອກຈາກຢູ່ລາວ ຍັງມີ ຢູ່ແຂວງ ເຊີນລາ ແລະ ແຂວງໄລເຈົາ ຂອງປະເທດ ຫວຽດນາມ ອີກດ້ວຍ. ຢູ່ ສປປ ລາວ ມີປະຊາກອນທັງໝົດ 8.565 ຄົນ, ຍິງ 4.211 ຄົນ, ເທົ່າກັບ 0.2% ຂອງພົນລະເມືອງໃນທົ່ວປະເທດ.



# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າ ຊິງມູນ ທີ່ດຳລົງຊີວິດຢູ່ ສປປ ລາວ ແມ່ນໄດ້ເຄື່ອນຍ້າຍມາຈາກ ປະເທດ ຫວຽດນາມ ໂດຍສະເພາະແມ່ນມາຈາກ ແຂວງເຊີນລາ ໃນຕົ້ນ ສະຕະວັດທີ XIX ແລະ ເຄື່ອນຍ້າຍເຂົ້າມາຫຼາຍໃນສະຕະວັດທີ XX, ສະໄໝສົງຄາມ ດຽນບຽນຟູ. ສາເຫດຂອງການຍົກຍ້າຍແມ່ນ ຍ້ອນການເກີດສົງຄາມເຮັດໃຫ້ສະພາບການດຳລົງຊີວິດພົບຄວາມຫຍຸ້ງຍາກຈຳເປັນໄດ້ພາກັນໄປລີ້ຊ່ອນຕາມຫ້ວຍ ແລະ ມີເຈົ້າກົກ, ເຈົ້າເຫຼົ່າຊື່ວ່າ ເຖົ້າເຈື້ອງກາ ແລະ ເຈື້ອງວານ ຊຶ່ງແມ່ນຕະກຸນດຽວກັນເປັນຜູ່ນຳພາ. ໃນຕອນເຂົ້າມາຢູ່ ລາວ ທຳອິດເຂົາເຈົ້າດຳລົງຊີວິດຢູ່ກະແຈກກະຈາຍ, ໄລຍະທີ່ມີການປະຕິວັດຊາດປະຊາທິປະໄຕເຂົາເຈົ້າຈຶ່ງໄດ້ເຕົ້າໂຮມຢູ່ເປັນບ້ານຈົນເຖິງປັດຈຸບັນນີ້.

ຊົນເຜົ່າ ຊິງມູນ ມີຫຼາຍຊື່ເອີ້ນເຊັ່ນ: ປວກ, ປວກດົງ, ປວກເດົາ, ແງດ ແລະ ລາວໃໝ່. ທັງໝົດໄດ້ກ່າວມານັ້ນເປັນຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ແຕ່ເຂົາເຈົ້າບໍ່ມັກ. ສ່ວນຊື່ທີ່ເຂົາເຈົ້າມັກ, ສະໝັກໃຈເອີ້ນຕົນເອງ ແລະ ຊື່ທີ່ໃຊ້ທາງການໃນປັດຈຸບັນແມ່ນຊົນເຜົ່າ "ຊິງມູນ" ເຊິ່ງມີຄວາມໝາຍວ່າ: "ຄົນພູ".

# ອາຊີບຂອງຊົນເຜົ່າ ຊິງມູນ

ພື້ນຖານດ້ານເສດຖະກິດຂອງຊົນເຜົ່າ ຊິງມູນ ແມ່ນເອົາການເຮັດໄຮ່ ປູກເຂົ້າ. ນອກນີ້, ເຂົາເຈົ້າຍັງລ້ຽງສັດ, ປູກພືດປະເພດຕ່າງໆ ເຊັ່ນ: ປູກສາລີ, ມັນຕົ້ນ, ມັນດ້າງ ແລະ ພືດຜັກຕ່າງໆສຳລັບຄອບຄົວ. ຄຽງຄູ່ກັບບັນຫາທີ່ກ່າວມານັ້ນຊົນເຜົ່າຊິງມູນ ຍັງມີມູນເຊື້ອທາງດ້ານ ຫັດຖະກຳຈັກສານ, ຫຍິບປັກຖັກແສ່ວອີກດ້ວຍ.

# ທີ່ຕັ້ງບ້ານ ແລະ ເຮືອນ

ລັກສະນະເຮືອນຂອງຊົນເຜົ່າ ຊິງມູນ ຕາມປະເພນີເຂົາເຈົ້າມັກປຸກສ້າງ ແລະ ຢູ່ເຮືອນຮ້ານ, ຊຶ່ງຫຼັງຄາມີ ຮູບຮ່າງຄ້າຍຄືຫຼັງໂຕເຕົ່າ. ສຳລັບຄອງການຄະລຳຢູ່ໃນເຮືອນແມ່ນບໍ່ໃຫ້ກາງມຸ້ງຂາວ, ບໍ່ໃຫ້ນອນຂວາງຕາມລວງ ຍາວຂອງເຮືອນ ແລະ ບໍ່ໃຫ້ເອົາຊີ້ນດິບທີ່ບໍ່ໄດ້ຫຸ້ມຫໍ່ຂຶ້ນລ່ວງຫ້ອງຢ່າງ ເດັດຂາດ. ສຳລັບລູກເຂີຍບໍ່ໄດ້ນັ່ງຕັ່ງຫວາຍ ແລະ ນັ່ງເທິງສະແນນ ຂອງພໍ່ເຖົ້າ.



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ແນວລາວສ້າງຊາດ ແຂວງ ຫົວພັນ

# ເຄື່ອງນຸ່ງຫົ່ມ

ເຄື່ອງນຸ່ງຫົ່ມເອ້ຍ້ອງປະຈຳຊົນເຜົ່າກໍເຊັ່ນດຽວກັນ ຊຶ່ງປັດຈຸບັນ ໄດ້ຫັນມາໃຊ້ເຄື່ອງນຸ່ງທີ່ຊື້ຈາກຕະຫຼາດ ແລະ ຈາກການແລກປ່ຽນສິນຄ້າກັບຊົນເຜົ່າທີ່ຢູ່ໃກ້ຄຽງ ໂດຍສະເພາະແມ່ນຊົນເຜົ່າ ລາວ ແລະ ຊົນເຜົ່າ ໄຕ.



ພາບໂດຍ: ແນວລາວສ້າງຊາດ ເມືອງ ຊຽງຄໍ້ ແຂວງ ຫົວພັນ



ພາບໂດຍ: ແນວລາວສ້າງຊາດ ເມືອງ ຊຽງຄໍ້ ແຂວງ ຫົວພັນ



# ອາຫານ ແລະ ເຄື່ອງດື່ມ

ແຕ່ກ່ອນຊົນເຜົ່າ ຊິງມູນ ແມ່ນມັກກິນອາຫານທີ່ລຽບງ່າຍບໍ່ຫຼາຍຢ່າງເປັນຕົ້ນ: ເຂົ້າ ແລະ ອາຫານປະເພດແກງ, ໝົກ, ຫຼາມ, ເອາະ ແລະ ອື່ນໆ. ດື່ມນ້ຳດິບ, ເຫຼົ້າໄຫ, ເຫຼົ້າຂາວ, ສູບຢາເສັ້ນ ແລະ ແມ່ຍິງທີ່ມີອາຍຸສູງ ມັກຄ້ຽວໝາກເປັນສ່ວນຫຼາຍ.



ພາບໂດຍ: ກົມຊົນເຜົ່າ

# ຄວາມເຊື່ອຖື

ຍ້ອນການດຳລົງຊີວິດຢູ່ໃກ້ກັບຊົນເຜົ່າອື່ນໆ ເປັນຕົ້ນແມ່ນຊົນເຜົ່າໄຕ ( ໄຕດຳ, ໄຕແດງ ) ຊົນເຜົ່າ ກຶມມຸ. ດັ່ງນັ້ນ, ຈຶ່ງເຮັດໃຫ້ເຂົາເຈົ້າມີປະເພນີ ຫຼາຍອັນຄ້າຍຄືກັບຊົນເຜົ່າອື່ນທີ່ຢູ່ໃກ້ຄຽງ ເຖິງຢ່າງໃດກໍ່ຕາມເຂົາເຈົ້າຍັງຮັກສາປະເພນີທີ່ເປັນເອກະລັກຂອງຕົນເອງໄວ້ຈຳນວນໜຶ່ງຄື: ມີຄວາມເຊື່ອຖື ແລະ ນັບຖືຜີເຊັ່ນ: ຜີພໍ່ແມ່, ຜີປ່າ, ຜີພູ, ຜີບ້ານ ແລະ ອື່ນໆ ເພື່ອສະແດງເຖິງຄວາມເຄົາລົບນັບຖື ແລະ ບູຊາ.ແຕ່ລະຫຼັງເຮືອນລ້ວນແຕ່ມີຫໍຜີຊຶ່ງປຸກສ້າງຢູ່ໃກ້ກັບເຮືອນຂອງຕົນ.

ນອກຈາກນີ້, ເຂົາເຈົ້າຍັງມີພິທີກຳ ຫຼື ຮີດຫຼາຍຢ່າງເຊັ່ນ: ພິທີປຸກສ້າງ ແລະ ຂຶ້ນເຮືອນໃໝ່, ພິທີກຳເກັບກ່ຽວເຂົ້າໃໝ່, ພິທີເຮັດຂ້ວນບ້ານ ແລະ ຂ້ວນເມືອງ ຊຶ່ງໃນແຕ່ລະພິທີກຳນັ້ນເປັນໂອກາດໃຫ້ເຂົາເຈົ້ານຶກເຖິງຈິດວິນຍານຂອງບັນພະບູລຸດທີ່ໄດ້ລ່ວງລັບໄປໂດຍສະເພາະແມ່ນ ຜູ້ທີ່ເສຍຊີວິດແບບຜິດປົກກະຕິ (ບໍ່ໄດ້ຮັບການປິ່ນປົວ).



ພາບໂດຍ: ແນວລາວສ້າງຊາດ ເມືອງ ຊຽງຄໍ້ ແຂວງ ຫົວພັນ

# ສິລະປະວັນນະຄະດີພື້ນເມືອງ

ດ້ານສິລະປະ-ວັນນະຄະດີຂອງຊົນເຜົ່າ ຊິງມູນ ໂດຍທົ່ວໄປແລ້ວເຂົາເຈົ້າບໍ່ມີເອກະລັກທາງດ້ານການຂັບລຳ, ເນື້ອຮອງທຳນອງເສບທີ່ເປັນອັນສະເພາະຂອງຊົນເຜົ່າຕົນ. ສຳລັບການເບີກບານມ່ວນຊື່ນຂອງທເຂົາເຈົ້າແມ່ນມີລັກສະນະຊອດກະຈາ, ໄດ້ຮັບເອົາອິດທິພົນຂອງບັນດາຊົນເຜົ່າທີ່ຢູ່ໃກ້ຄຽງເຂົ້າມາປະສົມປະສານ ແລະ ຮຽນແບບນຳບັນດາຊົນ ເຜົ່າອື່ນໆ ໃນສັງຄົມແຕ່ລະຍຸກສະໄໝ.



ພາບໂດຍ: ແນວລາວສ້າງຊາດ ເມືອງ ຊຽງຄໍ້ ແຂວງ ຫົວພັນ

# ພາສາປາກເວົ້າ

ຊົນເຜົ່າ ຊິງມູນ ມີພາສາປາກເວົ້າທີ່ເປັນເອກະລັກຂອງຕົນ, ຈັດເຂົ້າໃນ ໝວດພາສາມອນ-ຂະແມ, ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

*ຄັດຈາກປຶ້ມບັນດາຊົນເຜົ່າໃນ ສປປ ລາວ*

# ການສົມທຽບ ພາສາ ລາວ ກັບ ພາສາ ຊິງມູນ

| ລຳດັບ | ພາສາ ລາວ | ພາສາ ຊິງມູນ |
|---|---|---|
| 01 | ສະບາຍດີ | ຄູ້ນລໍບໍ |
| 02 | ໂຊກດີ | ໂຊກລໍບໍ |
| 03 | ຂອບໃຈ | ຈະເອີນເນີ |
| 04 | ຂໍໂທດ | ຂໍໂທດ |
| 05 | ເຈົ້າຊື່ຫຍັງ? | ມີມຊື່ແນວ? |
| 06 | ເຮັດຫຍັງຢູ່? | ມີມບີເໝາະແອ? |
| 07 | ກິນເຂົ້າແລ້ວບໍ? | ຈາປະແລ້ວອໍ? |
| 08 | ລາກ່ອນ | ຢູ່ເນີ |
| 09 | ພົບກັນໃໝ່ | ເທື່ອໜ້ານະອອມທະປານໃໝ່ |
| 10 | ບໍ່ເປັນຫຍັງ | ເກາະຕຸເໝາະລະ |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ເມືອງ ຊຽງຄໍ້ ແຂວງ ຫົວພັນ*